**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ອົງການໄອຍະການປະຊາຊົນສູງສຸດ
ຫ້ອງການ

ເລກທີ..18......./ຫກ
ນະຄອນຫລວງວຽງຈັນ,ວັນທີ..24../..04../2018

# ແຈ້ງການ

ເຖິງ : ຫ້ອງການ, ບັນດາກົມ ພາຍໃນອົງການໄອຍະການປະຊາຊົນສູງສຸດ.

ເລື່ອງ : ການພັດທະນາ ແລະ ປັບປຸງລະບົບເຄືອຂ່າຍອິນເຕີເນັດວາຍຟາຍ (Wi-Fi).

- ອີງຕາມທິດຊີ້ນຳໃນກອງປະຊຸມໜ່ວຍພັກຫ້ອງການ ໃນຄັ້ງວັນທີ 23/03/2018 ກ່ຽວກັບການພັດທະນາ ແລະ ປັບປຸງລະບົບເຄືອຂ່າຍອິນເນັດ (ວາຍຟາຍ Wi-Fi) ໃນແຕ່ລະຊັ້ນຢູ່ອົງການໄອຍະການປະຊາຊົນສູງສຸດ ໃຫ້ມີການຄຸ້ມຄອງເຂົ້າສູ່ລະບຽບຫລັກການ ແລະ ມີປະສິດທິພາບການນຳໃຊ້ເຂົ້າສູ່ວຽກງານຕົວຈິງ.
- ອີງຕາມການປະສານຮ່ວມກັບອາສາສະໝັກ, ຊ່ຽວຊານໄອທີ ມູນນິທິຄົ້ນຄວ້າແຫ່ງຊາດສາທາລະນະລັດເກົາຫລີ ໃນຄັ້ງວັນທີ 26/3/2018.

ຫ້ອງການອົງການໄອຍະການປະຊາຊົນສູງສຸດ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າໃນໄລຍະຜ່ານມາການນຳໃຊ້ວາຍຟາຍ Wi-Fi ຢູ່ອົງການໄອຍະການປະຊາຊົນສູງສຸດ ບໍ່ມີຄວາມສະດວກນັ້ນ ກໍເນື່ອງຈາກວ່າໄດ້ມີບຸກຄົນນຳໃຊ້ຫລາຍ ແລະ ຈຳນວນເພີ່ມຂຶ້ນອຸປະກອນເຊື່ອມຕໍ່ເຄື່ອງຮັບຮອງເອົາຜູ້ນຳໃຊ້. ສະນັ້ນ, ຈຶ່ງເປັນສາເຫດເຮັດໃຫ້ບາງຄັ້ງກໍ່ນຳໃຊ້ໄດ້ ແລະ ບາງຄັ້ງກໍນຳໃຊ້ບໍ່ໄດ້ ແລະ ໃຊ້ບໍ່ໄດ້ເລີຍ. ປັດຈຸບັນຈະໄດ້ມີການພັດທະນາ ແລະ ປັບປຸງລະບົບເຄືອຂ່າຍອິນເຕີເນັດ (ວາຍຟາຍ Wi-Fi) ໃນແຕ່ລະຊັ້ນນັ້ນແມ່ນໄດ້ເພີ່ມ ເລົາເຕີ Router ເຊື່ອມຕໍ່ອິນເຕີເນັດ ໃສ່ 03 ໜ່ວຍ, ໂດຍແມ່ນທາງຊ່ຽວຊານໄອທີເປັນຜູ້ສະໜັບສະໜູນຊ່ວຍເຫລືອໃນການພັດທະນາ, ປັບປຸງ ແລະ ປະກອບເຄື່ອງອຸປະກອນໄອທີ ລວມທັງໝົດ 13 ໜ່ວຍ, ແຕ່ຊັ້ນ 0 ຫາ ຊັ້ນ 4 ຢູ່ອົງການໄອຍະການປະຊາຊົນສູງສຸດ. ເລີ່ມຈັດຕັ້ງປະຕິບັດໃນ **ວັນທີ 7 - 21 / 05 / 2018.** ພະແນກເຕັກນິກຂໍ້ມູນ ແລະ ຂ່າວສານ ຮ່ວມກັບຊ່ຽວຊານໄອທີປັບປຸງລະບົບເຄືອຂ່າຍອິນເຕີເນັດທີ່ມີຢູ່ໃຫ້ດີຂຶ້ນເທື່ອລະກ້າວ ຊຶ່ງໄລຍະປັບປຸງຕິດຕັ້ງເຮັດຈະເຮັດໃຫ້ບໍ່ມີຄວາມສະດວກໃນການນຳໃຊ້ອິນເນັດເຂົ້າສູ່ວຽກງານຂອງທ່ານໃນການນຳໃຊ້ລະບົບ (ວາຍຟາຍ Wi-Fi) ໄດ້.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

**ຫົວໜ້າຫ້ອງການ**

**ບ່ອນສົ່ງເອກະສານ.**

1. ຫ້ອງການ..........................................01 ສະບັບ
2. ບັນດາກົມ .......................................01 ສະບັບ
3. ພະແນກເຕັກນິກຂໍ້ມູນ ແລະ ຂ່າວສານ .........01 ສະບັບ

ອົງການໄອຍະການປະຊາຊົນສູງສຸດ
ຫ້ອງການ

**ສີສຸນທອນ ສ.ຜານມີໄຊຍ໌**